# ພາລະບົດບາດ

| | |
|---|---|
| ຕຳແໜ່ງ | ຜູ້ຮັບຜິດຊອບວຽກສັງຄົມ ແລະ ບົດບາດຍິງ-ຊາຍ ຂັ້ນເມືອງ (DSGO) |
| ຈຳນວນທີ່ຕ້ອງການ | 1 |
| ບ່ອນປະຈຳການ | ຫ້ອງການໂຄງການປະຈຳເມືອງ |
| ຫົວໜ້າໜ່ວຍງານ | ຫົວໜ້າທີມງານ ຂັ້ນເມືອງ |
| ທີ່ປຶກສາດ້ານວິຊາການ | ຜູ້ຮັບຜິດຊອບວຽກສັງຄົມ ແລະ ບົດບາດຍິງ-ຊາຍ ຂັ້ນສູນກາງ (NSGO) |
| ປະສານງານໃກ້ສິດກັບ | ຜູ້ຮັບຜິດຊອບວຽກສິ່ງແວດລ້ອມ ຂັ້ນເມືອງ (DSGO), ທີມງານ ຂັ້ນເມືອງ |
| ໄລຍະເວລາ | ສັນຍາໜຶ່ງປີ ແລະ ການຕໍ່ອາຍຸຂຶ້ນກັບການທົບທວນຄືນການປະຕິບັດວຽກປະຈຳປີ, ຂໍ້ກຳນົດຂອງອົງການຈັດຕັ້ງ ແລະ ງົບປະມານຂອງ ໂຄງການ ປຊກ |

## ກ. ຄວາມເປັນມາ

ການປັບປຸງຊີວິດການເປັນຢູ່ຂອງຊົນນະບົດ ແລະ ກະສິກຳຂອງ ສປປ ລາວ ແມ່ນປັດໃຈສຳຄັນເພື່ອກ້າວໄປສູ່ການຫຼຸດຜ່ອນຄວາມທຸກຍາກ ແລະ ຄວາມອ່ອນແອ ທີ່ຍືນຍົງ ໃນເຂດເນີນສູງຂອງ ສປປ ລາວ.
ໃນຂະນະທີ່ປະມານ 2/3 ຂອງປະຊາກອນຂອງປະເທດອາໄສຢູ່ໃນເຂດຊົນນະບົດ ນັ້ນແມ່ນ 88 ສ່ວນຮ້ອຍຂອງຄອບຄົວທຸກຍາກທັງໝົດ. ເກືອບທັງໝົດຂອງຄອບຄົວທຸກຍາກແມ່ນຄອບຄົວກະສິກຳ. ປະມານເຄິ່ງໜຶ່ງຂອງຄອບຄົວກະສິກຳທີ່ທຸກຍາກ (ຫຼື 41 ສ່ວນຮ້ອຍຂອງຈຳນວນຜູ້ທຸກຍາກ) ແມ່ນຄອບຄົວທີ່ອາໄສຢູ່ໃນເຂດຫ່າງໄກສອກຫຼີກ, ສ່ວນຫຼາຍແມ່ນຢູ່ໃນເຂດບ້ານເນີນສູງ ທີ່ຍັງມີຄວາມຕ້ອງການທີ່ສຳຄັນສຳລັບການປັບປຸງພື້ນຖານໂຄງລ່າງຂະໜາດນ້ອຍ.
ໃນສະພາບການນີ້, ປຊກ ແມ່ນໂຄງການພັດທະນາຊຸມຊົນ ແລະ ທ້ອງຖິ່ນ, ເຊິ່ງແນໃສ່ປັບປຸງຊີວິດການເປັນຢູ່ຂອງຊົນນະບົດ ແລະ ການບໍລິໂພກອາຫານທີ່ຫຼາກຫຼາຍໃຫ້ແກ່ຊຸມຊົນທີ່ມີຄວາມສ່ຽງ ແລະ ຕອບສະໜອງໄດ້ທັນທີ ແລະ ມີປະສິດທິຜົນໃນກໍລະນີເກີດວິກິດການ ຫຼື ພາວະສຸກເສີນ. ໂຄງການດັ່ງກ່າວໄດ້ວາງເປົ້າໝາຍໃສ່ບາງຊຸມຊົນທີ່ດ້ອຍໂອກາດໃນ ສປປ ລາວ ໃນ 7 ແຂວງຄື: ຫົວພັນ, ອຸດົມໄຊ, ຜົ້ງສາລີ, ຊຽງຂວາງ, ສາລະວັນ, ສະຫວັນນະເຂດ ແລະ ເຊກອງ. ນອກຈາກນັ້ນ, ປຊກ ແມ່ນສ່ວນໜຶ່ງຂອງວິທີການປະສົມປະສານດ້ານໂພຊະນາການຫຼາຍຂະແໜງຂອງປະເທດ ແນໃສ່ການຫລຸດສະພາວະເຕັ້ຍໃຫ້ເຫຼືອ 25% ໃນປີ 2025.

ໂຄງການດັ່ງກ່າວປະກອບດ້ວຍ 5 ອົງປະກອບ:

ອົງປະກອບທີ 1: ການພັດທະນາເສດຖະກິດທ້ອງຖິ່ນ ແລະ ການສ້າງຄວາມເຂັ້ມແຂງຂອງຊຸມຊົນ (27,6 ລ້ານໂດລາສະຫະລັດ) ອົງປະກອບນີ້ສະໜັບສະໜູນກິດຈະກຳໃນລະດັບຂອງຊຸມຊົນທັງໝົດ. ກິດຈະກຳຈະເສີມສ້າງຄວາມສາມາດຂອງຊຸມຊົນ ເພື່ອຈັດລຳດັບຄວາມສຳຄັນຂອງຂໍ້ລິເລີ່ມລະດັບບ້ານທີ່ທົນທານຕໍ່ສະພາບອາກາດ ແລະ ການລົງທຶນພື້ນຖານໂຄງລ່າງຂະໜາດນ້ອຍທີ່ກ່ຽວຂ້ອງ ແລະ ຈັດລະບຽບການນຳໃຊ້ ແລະ ການປົກປັກຮັກສາ (O&M). ທັງໝົດນີ້ຈະເຮັດໃນແບບທີ່ສົ່ງເສີມການມີສ່ວນຮ່ວມຂອງສະມາຊິກຊຸມຊົນ ແລະ ເອົາໃຈໃສ່ຕໍ່ຄວາມຕ້ອງການຂອງແມ່ຍິງ, ທຸກກຸ່ມພາສາ-ຊົນເຜົ່າ ແລະ ກຸ່ມທີ່ມີຄວາມສ່ຽງ. ຈະໃຫ້ບຸລິມະສິດແກ່ບັນດາຂໍ້ລິເລີ່ມທີ່ແກ້ໄຂ

ອຸປະສັກຕໍ່ກັບຄວາມໝັ້ນຄົງດ້ານສະບຽງອາຫານ, ການປັບປຸງໂພຊະນາການ, ແລະ/ຫຼື ການສ້າງລາຍຮັບ. ການອອກແບບ, ການນຳໃຊ້ ແລະ ການປົກປັກຮັກສາພື້ນຖານໂຄງລ່າງຂະໜາດນ້ອຍຈະລວມເອົາຄຸນສົມບັດຂອງຄາບອນຕໍ່າ, ຄວາມທົນທານຕໍ່ສະພາບອາກາດເຊັ່ນ: ການທຳງານ, ຄວາມທົນທານ, ແລະ ຄວາມປອດໄພ

ອົງປະກອບທີ 2: ການປັບປຸງຊີວິດການເປັນຢູ່ຂອງຊຸມຊົນ (7.95 ລ້ານໂດລາສະຫະລັດ). ອົງປະກອບນີ້ສະໜັບສະໜູນກິດຈະກຳລະດັບກຸ່ມທີ່ສົ່ງເສີມການສ້າງລາຍຮັບ. ກຸ່ມຈະຖືກປັບຕົວເຂົ້າກັບສະພາບເສດຖະກິດ-ສັງຄົມຂອງບ້ານ. ຢູ່ໃນບ້ານປະເພດ II ແລະ ປະເພດ III, ປຊກ ຈະປະຕິບັດຕາມຂະບວນການຂອງ ທລຍ ໃນການສະໜັບສະໜູນກຸ່ມເງິນຝາກປະຢັດ ແລະ ສິນເຊື່ອ, ສ່ວນຫຼາຍແມ່ນແມ່ຍິງ, ການສ້າງຄວາມຮູ້ດ້ານການເງິນ, ແລະ ກິດຈະກຳການສ້າງລາຍຮັບທີ່ມີຄວາມຫຼາກຫຼາຍ, ທົນທານຕໍ່ສະພາບອາກາດ. ໃນບາງບ້ານປະເພດ III ທີ່ມີໂອກາດທາງດ້ານຕະຫຼາດທີ່ຊັດເຈນແລ້ວ, ໂຄງການຈະສະໜັບສະໜູນການສ້າງຕັ້ງ ແລະ ການສ້າງຂີດຄວາມສາມາດຂອງ ກຸ່ມຜະລິດ (PGs) ທີ່ໄດ້ລົງທະບຽນ ແລະ ຜູ້ຜະລິດວັດສະດຸປ້ອນ ກະສິກຳທີ່ຄຳນຶງເຖິງສະພາບການປ່ຽນແປງຂອງດິນຟ້າອາກາດ. ໃນບັນດາບ້ານປະເພດ I, ຄວາມສາມາດໃນການພັດທະນາວຽກງານເງິນຝາກປະຢັດ ແລະ ສິນເຊື່ອແບບຍືນຍົງຍັງຂາດເຂີນ ເນື່ອງຈາກສະມາຊິກໃນກຸ່ມສ່ວນໃຫຍ່ມີທັງຍິງ ແລະ ຊາຍ ທຸກຍາກກວ່າ, ກຸ່ມຈະດຳເນີນການຜະລິດສະບຽງອາຫານເພື່ອໃຫ້ມີສະບຽງອາຫານພຽງພໍໃນການບໍລິໂພກ ແລະ ສ້າງລາຍຮັບ

ອົງປະກອບທີ 3: ການແຊກແຊງດ້ານໂພຊະນາການຂອງຊຸມຊົນ (4.75ລ້ານໂດລາ) ອົງປະກອບນີ້ຈະສະໜັບສະໜູນການປັບປຸງການກິນອາຫານ (ທັງດ້ານຄຸນນະພາບ ແລະ ປະລິມານ) ຂອງແມ່ ແລະເດັກນ້ອຍໃນຮອບ 1,000 ວັນ ໂດຍຜ່ານການສົ່ງເສີມການປະຕິບັດດ້ານໂພຊະນາການແບບສ້າງສັນ. ອົງປະກອບແມ່ນອີງໃສ່ຫຼັກການ 5 ຢ່າງຄື: (ກ) ການນຳສະເໜີການບໍລິໂພກອາຫານປຸງແຕ່ງພາຍໃນບ້ານ, (ຂ) ການປະກອບສ່ວນຂອງຊຸມຊົນ, (ຄ) ການສ້າງແຮງຈູງໃຈທີ່ອີງໃສ່ຜົນໄດ້ຮັບສຳລັບຊາວບ້ານທີ່ມີການປະຕິບັດທີ່ດີ, (ງ) ເສີມສ້າງຄວາມເຂັ້ມແຂງຂອງໄວໜຸ່ມ. ແລະ ສື່ສັງຄົມ ແລະເພີ່ມແຫຼ່ງອາຫານໃຫ້ສູງສຸດໃນລະບົບອາຫານທ້ອງຖິ່ນທີ່ມີການຈຳກັດຊັບພະຍາກອນຫຼາຍຂຶ້ນ. ຄວາມຢືດຢຸ່ນຂອງຊຸມຊົນຈະຖືກເສີມສ້າງ ໂດຍຜ່ານການຮັກສາການລວມເຂົ້າກັນຂອງອາຫານຈາກການຜະລິດຂອງຄົວເຮືອນ, ການຊື້ອາຫານ ແລະ ການເກັບສະສົມຜະລິດຕະພັນອາຫານຈາກປ່າ. ແຫຼ່ງສະບຽງອາຫານທີ່ສົ່ງເສີມ, ຕົວຢ່າງ, ເຂດຜະລິດເຊັ່ນ: ສວນຄົວ, ຮົ້ວສວນ, ໄຮ່, ທົ່ງນາ, ປະເພດພືດ, ສູດອາຫານຈະຖືກປັບໃຫ້ແທດເໝາະກັບສະພາບນິເວດກະສິກຳ ແລະ ວັດທະນະທຳຂອງຊຸມຊົນ

ອົງປະກອບທີ 4: ການຄຸ້ມຄອງໂຄງການ, ການສ້າງຂີດຄວາມສາມາດ ແລະ ການຕິດຕາມ ແລະ ປະເມີນຜົນ (4.7 ລ້ານໂດລາສະຫະລັດ). ອົງປະກອບນີ້ສະໜອງການຊ່ວຍເຫຼືອດ້ານວິຊາການ ແລະ ການດຳເນີນງານສຳລັບການຄຸ້ມຄອງປະຈຳວັນຂອງໂຄງການທີ່ສະເໜີ ແລະ ລະບົບການຕິດຕາມ ແລະ ການປະເມີນຜົນ (M&E). ມັນກວມເອົາການຈ້າງງານ, ການຝຶກອົບຮົມ, ແລະຄ່າຕອບແທນຂອງພະນັກງານ ທລຍ ລະດັບຊາດ ແລະ ຂັ້ນເມືອງເຊັ່ນດຽວກັນກັບຄ່າໃຊ້ຈ່າຍຂອງຜູ້ອຳນວຍຄວາມສະດວກໃນບ້ານ; ອຸປະກອນທີ່ກ່ຽວຂ້ອງແລະຄ່າໃຊ້ຈ່າຍໃນການດຳເນີນງານ; ແລະການບັນຊີ, ການຈັດຊື້, ການຄູ້ມຄອງການເງິນ, ການຄວບຄຸມພາຍໃນ, ການກວດສອບ, ການປົກປ້ອງສິ່ງແວດລ້ອມ ແລະສັງຄົມ, ການຕິດຕາມ ແລະ ປະເມີນຜົນ, ແລະ ການສະໜັບສະໜູນພິເສດອື່ນໆ

ອົງປະກອບທີ 5: ການຕອບໂຕ້ເຫດສຸກເສີນ (US$0) ມູນຄ່າເບື້ອງຕົ້ນຂອງອົງປະກອບການຕອບໂຕ້ເຫດສຸກເສີນ (CERC) ແມ່ນສູນ, ແຕ່ມັນອາດຈະໄດ້ຮັບທຶນເພື່ອຕອບສະໜອງຕໍ່ວິກິດການ ຫຼືເຫດສຸກເສີນທີ່ມີເງື່ອນໄຂ. ບ້ານທັງສາມປະເພດ ແມ່ນມີສິດເທົ່າທຽມກັນ ກັບການຕອບໂຕ້ເຫດສຸກເສີນ ໃນກໍລະນີສຸກເສີນ ຫຼືວິກິດ. ກິດຈະກໍາ CERC ຈະສ້າງຍຸດທະສາດການຫຼຸດຜ່ອນຄວາມສ່ຽງໄພພິບັດ (DRR) ທີ່ມີຢູ່ແລ້ວຂອງປະເທດ

## ຂ. ພາລະບົດບາດໂດຍລວມ

ຄວາມຮັບຜິດຊອບຫຼັກຂອງຜູ້ຮັບຜິດຊອບວຽກສັງຄົມ/ບົດບາດຍິງ-ຊາຍ ຂັ້ນເມືອງ (DSGO) ແມ່ນເພື່ອຮັບປະກັນຂະບວນການ ແລະ ຂໍ້ກໍານົດທາງສັງຄົມທັງຫມົດສໍາລັບກິດຈະກໍາໂຄງການ ປຊກ ທີ່ປະຕິບັດຢູ່ໃນບ້ານເປົ້າຫມາຍ, ໂດຍເອົາໃຈໃສ່ໂດຍສະເພາະກັບຂອບການຄຸ້ມຄອງສິ່ງແວດລ້ອມ ແລະ ສັງຄົມ (ESMF) ແລະ ເອກະສານ/ເຄື່ອງມືທີ່ກ່ຽວຂ້ອງ. DSGO ຍັງຕ້ອງໄດ້ສະຫນອງການສະຫນັບສະຫນູນດ້ານວິຊາການສໍາລັບທຸກໆກິດຈະກໍາທີ່ກ່ຽວຂ້ອງກັບບົດບາດຍິງ-ຊາຍໃນລະດັບເມືອງ. DSGO ລາຍງານຕໍ່ຫົວໜ້າທີມງານຂັ້ນເມືອງ ແລະ ມີການຊີ້ນໍາດ້ານວິຊາການຈາກ ຜູ້ຮັບຜິດຊອບວຽກສັງຄົມ/ບົດບາດຍິງ-ຊາຍສູນກາງ (NSGO) ຂອງໂຄງການ ປຊກ.

## ຄ. ໜ້າທີ່ ແລະ ຄວາມຮັບຜິດຊອບ

*ຄວາມສ່ຽງທາງດ້ານສັງຄົມ ແລະ ມາດຕະການຫຼຸດຜ່ອນ*

1. ຕິດຕາມແຜນການຍົກຍ້າຍຈັດສັນແບບຫຍໍ້ (ARAP) ຖ້າໂຄງການມີຜົນກະທົບທີ່ດິນ, ການຍົກຍ້າຍ, ແລະ ຄ່າຊົດເຊີຍ;
2. ຊ່ວຍໃນການກະກຽມ ແຜນການຄຸ້ມຄອງສິ່ງແວດລ້ອມ ແລະ ສັງຄົມສະເພາະສະຖານທີ່ (SS-ESMP), ລະບຽບການຈັດຕັ້ງປະຕິບັດ ດ້ານສິ່ງແວດລ້ອມ ແລະ ສັງຄົມ (ESCOP), ແລະ/ຫຼື ມາດຕະການທີ່ຄວນປະຕິບັດ ແລະ ບໍ່ປະຕິບັດກິດຈະກໍາຂອງບ້ານ;
3. ພົວພັນກັບທີມງານພື້ນຖານໂຄງຮ່າງຂອງບ້ານ (VIT) ສໍາລັບແຜນການສໍາຫຼວດ ແລະ ເກັບກູ້ລະເບີດບໍ່ທັນແຕກ (ຖ້າຕ້ອງການ) ເພື່ອໃຫ້ມີໃບຢັ້ງຢືນການເກັບກູ້ລະເບີດບໍ່ທັນແຕກ ກ່ອນການເລີ່ມປະຕິບັດວຽກງານກໍ່ສ້າງໃນເຂດສ່ຽງລະເບີດບໍ່ທັນແຕກ;
4. ກໍານົດຄວາມສ່ຽງທາງສັງຄົມ, ຜົນກະທົບ, ແລະ ມາດຕະການ ການຫຼຸດຜ່ອນ ໃນລະຫວ່າງການກະກະກຽມກິດຈະກໍາ/ວຽກງານພື້ນຖານໂຄງລ່າງ;
5. ຕິດຕາມການປະຕິບັດມາດຕະການຄວາມສ່ຽງທາງສັງຄົມແລະການຫຼຸດຜ່ອນຄວາມສ່ຽງ, ຮັບປະກັນຄວາມສອດຄ່ອງຕາມຂໍ້ກໍານົດຂອງຂອບການດ້ານສິ່ງແວດລ້ອມ ແລະ ສັງຄົມ (ESF) ອື່ນໆ;
6. ແກ້ໄຂຄວາມສ່ຽງ ແລະ ຜົນກະທົບທາງສັງຄົມ ໃນໄລຍະການຈັດຕັ້ງປະຕິບັດວຽກງານພື້ນຖານໂຄງລ່າງ, ຂໍຄໍາແນະນໍາຈາກຜູ້ຮັບຜິດຊອບວຽກສັງຄົມ/ບົດບາດຍິງ-ຊາຍສູນກາງ (NSGO), ຫົວໜ້າທີມງານຂັ້ນເມືອງ (DTL)

ແລະ ທີມງານຄຸ້ມຄອງໂຄງການຂັ້ນແຂວງ (PPM) ກ່ຽວກັບມາດຕະການທີ່ຈໍາເປັນເພື່ອຮັບປະກັນຄວາມສອດຄ່ອງຕາມມາດຕະການຫຼຸດຜ່ອນຄວາມສ່ຽງທາງສັງຄົມ;

7. ເຂົ້າຮ່ວມການຝຶກອົບຮົມ ແລະ ການສ້າງຂີດຄວາມສາມາດກ່ຽວກັບມາດຕະຖານສິ່ງແວດລ້ອມ ແລະ ສັງຄົມ (ESSs) ແລະ ໃຫ້ການແນະນໍາຊຸກຍູ້ແກ່ພະນັກງານທ້ອງຖິ່ນ, ທີມງານພື້ນຖານໂຄງຮ່າງຂອງບ້ານ (VITs), ພະນັກງານໂຄງການ ແລະ ພາກສ່ວນກ່ຽວຂ້ອງອື່ນໆ;
8. ສະໜັບສະໜູນ ຜູ້ຮັບຜິດຊອບວຽກສັງຄົມ/ບົດບາດຍິງ-ຊາຍສູນກາງ (NSGO) ໃນການຈັດຕັ້ງປະຕິບັດ SEP, ESMF ແລະ ESCP ໃຫ້ມີປະສິດຕິຜົນ, ຊ່ວຍໃນການຝຶກອົບຮົມກ່ຽວກັບມາດຕະຖານສິ່ງແວດລ້ອມ ແລະ ສັງຄົມ (ESSs) ແລະ ຂໍ້ກໍານົດ ແລະ ກະທົບຕໍ່ການຈັດຕັ້ງປະຕິບັດໂຄງການໃນແຕ່ລະໄລຍະໃຫ້ແກ່ທີມງານວິສະວະກອນໃນລະດັບທ້ອງຖິ່ນ, ທີມງານພື້ນຖານໂຄງຮ່າງຂອງບ້ານ (VITs), ພະນັກງານໂຄງການອື່ນໆ ແລະ ຜູ້ມີສ່ວນໄດ້ສ່ວນເສຍທີ່ກ່ຽວຂ້ອງ; ອີງຕາມແຜນການມີສ່ວນຮ່ວມຂອງຜູ້ມີສ່ວນໄດ້ສ່ວນເສຍ (SEP), ຮັບປະກັນວ່າ VITs ສ້າງຕັ້ງ ແລະ ຮັກສາລະບົບການບັນທຶກທີ່ເໝາະສົມ ສໍາລັບຄວາມສ່ຽງທາງສັງຄົມ, ຜົນກະທົບ, ແລະ ກິດຈະກໍາມາດຕະການຫຼຸດຜ່ອນ ແລພ ລວມທັງ ບັນຫາທີ່ໄດ້ຮັບການແກ້ໄຂແລ້ວນັ້ນ ລາຍງານໃຫ້ ຫົວໜ້າທີມງານຂອງເມືອງ (DTL) ແລະ/ຫຼື NSGO ເພື່ອກວດສອບ;
9. ຈັດຕັ້ງປະຕິບັດແຜນການມີສ່ວນຮ່ວມຂອງຜູ້ມີສ່ວນໄດ້ສ່ວນເສຍ) SEP) ເພື່ອຮັບປະກັນໃຫ້ທັນເວລາ, ມີຄວາມກ່ຽວຂ້ອງ, ເຂົ້າໃຈໄດ້ ແລະ ສາມາດສະໜອງຂໍ້ມູນຂ່າວສານໃຫ້ແກ່ຜູ້ມີສ່ວນໄດ້ສ່ວນເສຍ. ການປະຊຸມປຶກສາຫາລືກັບຜູ້ມີສ່ວນໄດ້ສ່ວນເສຍ ໄດ້ດໍາເນີນໄປໃນລັກສະນະທີ່ເໝາະສົມກັບວັດທະນະທໍາທ່ອງຖິ່ນ, ໂດຍປາສະຈາກການສວຍໃຊ້ໂອກາດ, ການແຊກແຊງ, ການບີບບັງຄັບ, ການຈໍາແນກ, ແລະ ການຂົ່ມຂູ່
10. ສ້າງຕັ້ງ, ເຜີຍແຜ່, ຮັກສາ ແລະ ດໍາເນີນກົນໄກການແກ້ໄຂຄໍາຮ້ອງທຸກ (GRM) ທີ່ສາມາດເຂົ້າເຖິງໄດ້, ຮັບປະກັນ ຄວາມໝາະສົມກັບ ວັດທະນະທໍາຂອງຊົນເຜົ່າ (EG), ການລວມເອົາການປະຕິບັດການແກ້ໄຂການຮ້ອງທຸກແບບບໍ່ເປັນທາງການ, ແລະ ສະໜອງຊ່ອງທາງໃນການຮັບຄໍາຮ້ອງທຸກທີ່ຫລາກຫລາຍ ທັງທາງວາຈາ ແລະ ເປັນລາຍລັກອັກສອນ ແລະ ສະໜອງການຝຶກອົບຮົມໃຫ້ແກ່ ຊຸມຊົນທ້ອງຖິ່ນກ່ຽວກັບການສ້າງຕັ້ງ ແລະ ການຈັດຕັ້ງປະຕິບັດ GRM. ຮັບປະກັນວ່າ GRM ສາມາດຈັດການກັບການຮ້ອງຮຽນຂອງ SEA/SH ໃນລັກສະນະທີ່ປອດໄພ, ເປັນຄວາມລັບ, ແລະ ຖືເອົາ ມີຜູ້ລອດຊີວິດເປັນໃຈກາງ.
11. ຕິດຕາມ ແລະ ຮັກສາຂັ້ນຕອນກົນໄກການແກ້ໄຂຄໍາຮ້ອງທຸກ (GRM) ທີ່ສາມາດເຂົ້າເຖິງໄດ້, ເຊິ່ງລວມມີ.
    - ເພື່ອ ສົ່ງໄປໃຫ້ ຖານຂໍ້ມູນ MIS.
    - ເພື່ອ ຕິດຕາມ ແລະ ບັນທຶກການຈັດຕັ້ງປະຕິບັດ GRM.
    - ເພື່ອຮັບປະກັນ GRM ສາມາດເຂົ້າເຖິງໄດ້ສໍາລັບທຸກໂຄງການ - ພາກສ່ວນທີ່ໄດ້ຮັບຜົນກະທົບ ລວມທັງກຸ່ມທີ່ບໍ່ແມ່ນຄົນລາວ ແລະກຸ່ມທີ່ມີຄວາມສ່ຽງໂດຍບໍ່ເສຍຄ່າ, ໃນລັກສະນະທີ່ສອດຄ່ອງກັບ ESS10.
12. ຕິດຕາມການຈັດຕັ້ງປະຕິບັດຂັ້ນຕອນການຄຸ້ມຄອງແຮງງານ (LMP) ເປັນສ່ວນໜຶ່ງຂອງ ESMF ສໍາລັບໂຄງການ, ລວມທັງ, ຕ່າງປະເທດ, ຂໍ້ກໍານົດກ່ຽວກັບເງື່ອນໄຂການເຮັດວຽກ, ການຄຸ້ມຄອງຄວາມສໍາພັນຂອງແຮງງານ, ສຸຂະພາບແລະຄວາມປອດໄພຂອງອາຊີບ (ລວມທັງອຸປະກອນປ້ອງກັນສ່ວນບຸກຄົນ, ແລະ ການກະກຽມ ແລະ ການຕອບໂຕ້ສຸກເສີນ), ກົດລະບຽບການປະພຶດ (ລວມທັງທີ່ກ່ຽວຂ້ອງກັບການຂູດຮີດທາງເພດແລະການລ່ວງລະເມີດທາງເພດ (SEA), ການຄຸກຄາມທາງເພດ (SH), ຄວາມຮຸນແຮງຕໍ່ເດັກນ້ອຍ (VAC),

ການບັງຄັບໃຊ້ແຮງງານ, ແຮງງານເດັກ), ການຈັດແຈງຮ້ອງທຸກສຳລັບພະນັກງານໂຄງການ, ແລະ ຂໍ້ກຳນົດທີ່ກ່ຽວຂ້ອງສຳລັບ VITs/VSMCs;

13. ຈັດຕັ້ງປະຕິບັດມາດຕະການ ແລະ ການກະທຳທີ່ຈຳເປັນ ພາຍໃນຂອບເວລາທີ່ກຳນົດໄວ້ໃນເຄື່ອງມືສັງຄົມສຳລັບກິດຈະກຳພາຍໃຕ້ອົງປະກອບການຕອບໂຕ້ສຸກເສີນທີ່ຈຳເປັນ (CERC) ຂອງໂຄງການຕາມຄູ່ມື CERC;
14. ເປັນຈຸດປະສານງານ ໃຫ້ແກ່ວຽກງານກ່ຽວກັບ ຄວາມສ່ຽງທາງດ້ານສັງຄົມ ແລະ ມາດຕະການຫຼຸດຜ່ອນ ແລະ GRM ຢູ່ຂັ້ນເມືອງ

*ວຽກບົດບາດຍິງ-ຊາຍ*

15. ຕິດຕາມ ແລະ ຮັບປະກັນໃຫ້ພະນັກງານໂຄງການຢູ່ຂັ້ນເມືອງ ຕະຫຼອດຮອດ ພະນັກງານຂັ້ນບ້ານ (YG) ໄດ້ມີສ່ວນຮ່ວມຢ່າງຫ້າວຫັນໃນການຈັດຕັ້ງປະຕິບັດ ແຜນສົ່ງເສີມບົດບາດຍິງ-ຊາຍ ແລະ ສັງຄົມ (GESI AP) ເພື່ອອຳນວຍຄວາມສະດວກ ແລະ ເສີມຂະຫຍາຍການມີສ່ວນຮ່ວມຢ່າງຫ້າວຫັນຂອງຜູ້ໄດ້ຮັບຜົນປະໂຫຍດທັງຍິງ ແລະ ຊາຍ ຫຼື ຊາວບ້ານໃນໂຄງການທັງໝົດ
16. ລາຍງານປະຈຳເດືອນ ຄວາມຄືບໜ້າຂອງການຈັດຕັ້ງປະຕິບັດ GESI AP.
17. ກະກຽມບົດລາຍງານປະຈຳເດືອນ ທີ່ກ່ຽວຂ້ອງກັບ ການສົ່ງເສີມບົດບາດຍິງຊາຍ ແລະ ສັງຄົມ ຕາມທີ່ໄດ້ກຳນົດໄວ້ໃນ GESI AP ພ້ອມທັງກະກຽມບົດລາຍງານຄວາມຄືບໜ້າການຈັດຕັ້ງປະຕິບັດໂຄງການເຄິ່ງປີ ແລະ ປະຈຳປີ ທີ່ກ່ຽວຂ້ອງກັບບົດບາດຍິງ-ຊາຍ
18. ຊ່ວຍເຫຼືອໃນການຈັດຕັ້ງປະຕິບັດໂຄງການຝຶກອົບຮົມ CDD ໃນບ້ານເປົ້າໝາຍ

<u>*ການລາຍງານ*</u>

19. ກະກຽມ ແລະ ສົ່ງບົດລາຍງານໃຫ້ກັບ NSGC ກ່ຽວກັບການປະຕິບັດດ້ານສິ່ງແວດລ້ອມ-ສັງຄົມ, ສຸຂະພາບ ແລະ ຄວາມປອດໄພ (ESHS) ຂອງໂຄງການທຸກໆຫົກເດືອນ;
20. ກະກຽມບົດລາຍງານການຈັດຕັ້ງປະຕິບັດ ແລະ ການຕິດຕາມ ຂອບວຽກສິ່ງແວດລ້ອມ-ສັງຄົມ (ESF) ແລະ ປັບປຸງເອກະສານ ແລະ/ຫຼື ຄູ່ມືທີ່ກ່ຽວຂ້ອງຂອງ ESF ຕາມຄຳແນະນຳຂອງ NSGC;
21. ສະໜອງຂໍ້ມູນ ກ່ຽວກັບການກັ່ນຕອງບັນຫາ ສິ່ງແວດລ້ອມ ແລະ ສັງຄົມ (E&S) ແລະ ເຄື່ອງມືເພື່ອຫຼຸດຜ່ອນຜົນກະທົບ- ຖ້າມີຜົນກະທົບທີ່ດິນ, ການຍົກຍ້າຍ, ແລະ/ຫຼື ການຊົດເຊີຍ ຕາມຄຳແນະນຳຂອງ NSGC.
22. ຕິດຕາມ ແລະ ລາຍງານເຫດການ ຫຼື ອຸບັດເຫດທີ່ກ່ຽວຂ້ອງກັບໂຄງການທີ່ສົ່ງຜົນກະທົບທາງລົບຕໍ່ສິ່ງແວດລ້ອມ, ຕໍ່ຊຸມຊົນທີ່ໄດ້ຮັບຜົນກະທົບ, ສາທາລະນະ ຫຼື ຄົນງານ, ລວມທັງ ກໍລະນີຕ່າງໆ, ກໍລະນີ SEA, SH, ແລະ ອຸປະຕິເຫດທີ່ສົ່ງຜົນໃຫ້ເກີດ ການເສຍຊີວິດ, ການບາດເຈັບສາຫັດຫຼືມີບາດເຈັບຫລາຍບ່ອນ ແລະ ສະເໜີມາດຕະການອື່ນໆເພື່ອແກ້ໄຂແລະປ້ອງກັນເພື່ອບໍ່ໃຫ້ມີເຫດເກີດຂື້ນໃຫມ່

<u>*ວຽກງານອື່ນໆທີ່ກ່ຽວຂ້ອງ*</u>

23. ປະຕິບັດວຽກງານທີ່ຕຈຳເປັນອື່ນໆທີ່ໄດ້ກ່າວໄວ້ໃນ ຂອບວຽກ ແລະ ເຄື່ອງມື ການຄຸ້ມຄອງ ສິ່ງແວດລ້ອມ-ສັງຄົມຂອງໂຄງການ ລວມທັງ ESCP, LMP, RPF, SEP, ອື່ນໆ;

24. ຊຸກຍູ້ ແລະ ອະທິບາຍຫຼັກການການເຮັດວຽກຂອງໂຄງການ, ຂະບວນການ ແລະ ຜົນສຳເລັດໃຫ້ແກ່ຜູ້ຕາງໜ້າລັດຖະບານ, ຜູ້ໃຫ້ທຶນ, ພາກສ່ວນທີ່ກ່ຽວຂ້ອງ ແລະ ອົງການສັງຄົມ (CSOs);
25. ປະຕິບັດວຽກງານອື່ນໆຕາມການຮຽກຮ້ອງຂອງຫົວໜ້າງານ ແລະ ທີ່ປຶກສາດ້ານວິຊາການ, ອີງຕາມຄວາມຈຳເປັນຂອງໂຄງການ

## ໗. ເງື່ອນໄຂຜູ້ສະໝັກ

- ຢ່າງໜ້ອຍຕ້ອງຮຽນຈົບລະດັບຊັ້ນສູງ ສາຂາການພັດທະນາສັງຄົມ, ວິທະຍາສາດສັງຄົມ, ການພັດທະນາຊຸມຊົນ ຫຼື ສາຂາອື່ນທີ່ກ່ຽວຂ້ອງ;
- ມີປະສົບການເຮັດວຽກຢ່າງໜ້ອຍ 3 ປີ ກ່ຽວກັບວຽກງານປົກປ້ອງ/ຄຸ້ມຄອງສັງຄົມ, ການພັດທະນາຊຸມຊົນໃນເຂດຊົນນະບົດຫ່າງໄກສອກຫຼີກ;
- ມີປະສົບການເຮັດວຽກກັບຊຸມຊົນ ແລະ ອຳນາດການປົກຄອງທ້ອງຖິ່ນ, ໂດຍເນັ້ນໃສ່ຄອບຄົວທຸກຍາກ, ຊົນເຜົ່າ ແລະ ບັນຫາບົດບາດຍິງ-ຊາຍ ຈະພິຈາລະນາເປັນພິເສດ;
- ມີທັກສະທາງດ້ານຄອມພິວເຕີ ມີຄວາມສາມາດນຳໃຊ້ Microsoft Office;
- ມີທັກສະໃນການປະຕິບັດ ແລະ ການແກ້ໄຂບັນຫາໄດ້ດີ;
- ມີຄວາມສາມາດໃນການເຮັດວຽກ ແລະ ການເດີນທາງໃນເຂດຊົນນະບົດ;
- ຕ້ອງເປັນສັນຊາດລາວເທົ່ານັ້ນ.